# ຈົດໝາຍຂ່າວ

ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ

ສະບັບທີ 117 ກຸມພາ 2011

ອພ 137 / ພຈ 290311 ຈພ 500

ຊົມເຊີຍ ວັນສ້າງຕັ້ງກຳມະບານລາວ ຄົບຮອບ 45 ປີ (1966 - 2011) ຢ່າງສຸດໃຈ


## ສາລະບານ


ກອງປະຊຸມ...
ໜ້າ 1 - 4

ການຜະລິດຝຸ່ນອິນຊີ
ໜ້າ 5 - 6

ສິ່ງຄວນຮູ້ຕ່າງໆ...
ໜ້າ 6 - 8



ຄະນະຮັບຜິດຊອບ
ດຣ. ບຸນຖອງ ບົວຫອມ
ໄວຍະພັດ ທັດຕະມະນີວົງ

ບັນນາທິການ
ອະໂນລາດ ຈັນທະວົງສາ
ບັນດິດ ຣາມາງກຸນ

ອອກແບບ
ຂັນຄຳ ອ້ວນອຸດົມ
ພູທອນ ສິມມະວັນ



ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ,
ຕູ້ ປ. ນ. 7170 ວຽງຈັນ
ໂທ: (856 21) 770892
ແຟກ (856 21) 770892
Email: khanhkam@anfri.org.la
020 55426630
www. nafri.org.la



Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra
Swiss Agency for Development and Cooperation SDC

ສະໜັບສະໜູນ ໂດຍ: ໂຄງການຄົ້ນຄວ້າ ລະບົບຜະລິດກະສິກຳເຂດພູດອຍ ໂດຍ ອີງໃສ່ເຂົ້າເປັນພື້ນຖານ


## ກອງປະຊຸມ ການອະນຸລັກເຊື້ອພັນເຂົ້າ ຢູ່ ສປປ ລາວ

*ໂດຍ: ພູທອນ ສິມມະວັນ, ສູນຂໍ້ມູນຂ່າວສານ*

ສປປ ລາວ ເປັນປະເທດນຶ່ງ ທີ່ອຸດົມສົມບູນໄປດ້ວຍຊີວະນາໆພັນພືດ ແລະ ສັດ ໂດຍສະເພາະ ແມ່ນແນວພັນເຂົ້າ ແລະ ເຂົ້າກໍ່ແມ່ນພືດອາຫານຫຼັກຂອງຄົນລາວ, ປະຊາຊົນລາວ ໄດ້ນຳໃຊ້ ແລະ ອະ ນຸລັກແນວພັນເຂົ້າມາແຕ່ດຶກດຳບັນ ດ້ວຍຄວາມຮູ້ຄວາມເຂົ້າໃຈ ຈາກພາກປະຕິບັດຕົວຈິງ. ດັ່ງນັ້ນ, ເພື່ອເປັນການສະໜັບສະໜູນ, ທັງເປັນການເພີ້ມການອະນຸລັກແນວພັນເຂົ້າ.

ໃນວັນທີ 1 ກຸມພາ 2011 ຜ່ານມານີ້, ທີ່ໂຮງແຮມລາວພລາຊາ ໄດ້ຈັດກອງປະຊຸມກ່ຽວກັບການ ອະນຸລັກເຊື້ອພັນເຂົ້າ ໃນທຳມະຊາດ ຢູ່ ສປປ ລາວຂຶ້ນ ໂດຍສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ (NAFRI) ສປປ ລາວ ຮ່ວມກັບ ສະຖາບັນ ຄົ້ນຄວ້າ ມະນຸດສາດ ແລະ ທຳມະຊາດ (RIHN) ປະເທດຍີ່ປຸ່ນ ພາຍໃຕ້ການເປັນປະທານ ຂອງ ທ່ານ ດຣ.ບຸນຖອງ ບົວຫອມ ຫົວໜ້າ ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ. ມີຜູ້ຕາງໜ້າຈາກສະຖາບັນ ຄົ້ນຄວ້າ ມະນຸດສາດ ແລະ ທຳມະຊາດ (RIHN) ປະເທດຍີ່ປຸ່ນ, ຫົວໜ້າກົມ, ຮອງກົມ ຈາກ ກະຊວງ ກະສິກຳ ແລະ ປ່າໄມ້, ກອງສົ່ງເສີມ ກະ ສິກຳ ແລະ ປ່າໄມ້ ແຫ່ງຊາດ, ຄະນະກະເສດສາດ ມະຫາວິທະຍາໄລແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວ ຂ້ອງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງລາຍງານກ່ຽວກັບການອະນຸລັກພັນເຂົ້າ ແລະ ການນຳໃຊ້ແນວພັນເຂົ້າພື້ນເມືອງລາວສືບຕໍ່ກັນມາເກືອບສອງທົດສະວັດແລ້ວ ຊຶ່ງສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ ໄດ້ຮ່ວມກັບ ໂຄງການ ລາວ - ອີຣີ ໂດຍໄດ້ຮັບທຶນສະໜັບສະໜູນ ຈາກອົງການພັດທະນາ ແລະ ການຮ່ວມມື ປະເທດສະວີດເຊີແລນ ໄດ້ເກັບກຳ ແລະ ເຕົ້າໂຮມແນວພັນເຂົ້າພື້ນເມືອງ (Caltivated Rice) ແລະ ເຂົ້າປ່າ (Wild Rice) ຢູ່ ສປປ ລາວ. ຍ້ອນຜົນສຳເລັດດັ່ງກ່າວ ປະເທດຍີ່ປຸ່ນ ຈຶ່ງໄດ້ເຂົ້າມາຮ່ວມກັບ NAFRI ສປປ ລາວ ໃນປີ 2003 ເພື່ອສືບຕໍ່ສຶກສາຕີລາຄາ ແລະ ນຳໃຊ້ເຂົ້າ ໃນ ວຽກງານຄົ້ນຄວ້າ ທັງພາຍໃນປະເທດ ແລະ ລະດັບສາກົນ.

ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ໄດ້ເຕົ້າໂຮມ ແນວພັນເຂົ້າພື້ນເມືອງລາວ ໄດ້ 13,913 ຕົວຢ່າງ ແລະ ເຂົ້າປ່າ 6 ຊະນິດ ມີທັງເຂົ້ານາ ແລະ ເຂົ້າໄຮ່. ດັ່ງນັ້ນ ເພື່ອໃຫ້ວຽກງານ ດັ່ງກ່າວໄດ້ຖືກຈັດຕັ້ງປະຕິບັດໃຫ້ເປັນຮູບປະທຳ ທັງສອງອົງ ການ NAFRI ແລະ RHIN ຈຶ່ງໄດ້ສືບຕໍ່ຈັດຕັ້ງປະຕິບັດ ແລະ ຮ່ວມມືກັນສ້າງສະຖານທີ່ ເພື່ອອະນຸຮັກເຊື້ອພັນເຂົ້າໃນທຳ ມະຊາດຂຶ້ນ ຢູ່ ສປປ ລາວ. ປັດຈຸບັນ ສະຖານທີ່ອະນຸລັກເຂົ້າ ປ່າໃນທຳມະຊາດ ໄດ້ຕັ້ງຢູ່ບ້ານທົ່ງມັ່ງ ເມືອງໄຊທານີ ນະຄອນ ຫຼວງວຽງຈັນ.

## ກອງປະຊຸມ ສະຫຼຸບຜົນການເຄື່ອນໄຫວວຽກງານ 1 ປີຜ່ານມາ ແລະ ແຜນການເຄື່ອນໄຫວ 1 ປີ ຕໍ່ໜ້າ ຂອງ ຊປປ ລາວ ຮາກຖານ ສຄກປ

*ໂດຍ: ພູທອນ ສິມມະວັນ, ສູນຂໍ້ມູນຂ່າວສານ*

ໃນຕອນເຊົ້າຂອງວັນທີ 11 ກຸມພາ 2011 ຢູ່ທີສະ ໂມສອນໃຫຍ່, ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ ໄດ້ເປີດກອງປະຊຸມ ສະຫຼຸບຜົນການເຄື່ອນໄຫວ ວຽກງານ 1 ປີຜ່ານມາ ປະຈຳສົກປີ 2009 – 2010 ແລະ ຜ່ານແຜນການເຄື່ອນໄຫວວຽກງານ ໃນຊຸມປີຕໍ່ໜ້າ ສົກປີ 2010 – 2011 ພ້ອມດ້ວຍຍ້ອງຍໍບຸກຄົນ ທີ່ມີ ຜົນງານດີເດັ່ນ ຂອງ ໜ່ວຍ ຊປປ ລາວ ຮາກຖານ ສຄກປ ໃຫ້ກຽດເປັນປະທານຮ່ວມ ໃນກອງປະຊຸມຄັ້ງນີ້ ມີ ທ່ານ ສີສະຫວ່າງ ວົງຫາຈັກ ຄະນະພັກຮາກຖານ ສະ ຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ ແລະ ທ່ານ ຮສ. ດຣ. ລິນຄຳ ດວງສະຫວັນ ເລຂາ ຊປປ ລາວ ກະຊວງ ກະສິກຳ ແລະ ປ່າໄມ້. ໃນກອງປະຊຸມ ມີສະມາ ຊິກຊາວໜຸ່ມ ຂອງ ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ ເຂົ້າຮ່ວມທັງໝົດ 115 ສະຫາຍ ແລະ ແຂກທີ່ຖືກເຊີນ ຈາກອົງການຈັດຕັ້ງອ້ອມຂ້າງ 11 ທ່ານ.

ຈຸດປະສົງຂອງກອງປະຊຸມ ແມ່ນເພື່ອຜ່ານບົດ ລາຍງານການເຄື່ອນໄຫວວຽກງານ ໃນ 1 ປີ ຜ່ານມາ ແລະ ສະເໜີແຜນການເຄື່ອນໄຫວໃນ 1 ປີ ຕໍ່ໜ້າ ຂອງ ຊປປ ລາວ ຮາກຖານ ສຄກປ. ເພື່ອເປັນການຂໍທິດຊີ້ນຳຕໍ່ກັບແຜນ ດັ່ງ ກ່າວ ຈາກຄະນະພັກ ສະຖາບັນ ແລະ ຄະນະບໍລິຫານງານ ຊປປ ລາວ ກະຊວງ ກະສິກຳ ແລະ ປ່າໄມ້ ພ້ອມທັງເປັນການ ເຜີຍແຜ່ຜົນງານດັ່ງກ່າວ ໃຫ້ແກ່ບັນດາສະມາຊິກ ຊປປ ລາວ

ຂາວໜຸ່ມທັງໝົດ 216 ສະຫາຍ, ແບ່ງອອກເປັນ 6 ໜ່ວຍ ຊປປ ລາວ.

ໃນກອງປະຊຸມ, ທ່ານປະທານ ຍັງໄດ້ມອບ ໃບຍ້ອງຍໍ ແລະ ໃບຊົມເຊີຍ ຂອງ ຄະນະບໍລິຫານງານ ສູນກາງຊາວໜຸ່ມ ປະຊາຊົນປະຕິວັດລາວ ໃຫ້ແກ່ສະມາຊິກ ຜູ້ທີ່ມີຜົນງານດີເດັ່ນ ໃນຂະບວນການປະກອບສ່ວນສ້າງຜົນງານພັດທະນາ ຂະແໜງກະສິກຳ ແລະ ປ່າໄມ້ ໃນໄລຍະ 1 ປີ ແລະ 5 ປີ ຜ່ານມາ. ເຊິ່ງໃນນີ້ ມີສະມາຊິກຜູ້ທີ່ໄດ້ຮັບໃບຍ້ອງຍໍຜົນງານ 5 ປີ ມີຈຳນວນ 195 ສະຫາຍ, ຊົມເຊີຍຜົນງານ 5 ປີ ມີ 46 ສະຫາຍ ແລະ ຍ້ອງຍໍຜົນງານ 1 ປີ ມີ 210 ສະຫາຍ, ຊົມເຊີຍຜົນງານ 1 ປີ ມີ 35 ສະຫາຍ. ໃນຕອນທ້າຍ ຂອງ ກອງປະຊຸມ ທ່ານ ສີສະຫວ່າງ ວົງທາຈັກ ຄະນະພັກຮາກຖານ ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ ໄດ້ໃຫ້ຄຳໂອວາດ ແລະ ທິດຊີ້ນຳ ຕໍ່ສະມາຊິກຊາວໜຸ່ມທັງໝົດ ທີ່ເຂົ້າຮ່ວມກອງ ປະຊຸມດັ່ງກ່າວ.

ຮາກຖານ ສຄກປ ໄດ້ຮັບຮູ້, ເຫັນໄດ້ເຖິງເປົ້າໝາຍ ແລະ ຈຸດ ປະສົງຂອງແຜນການເຄື່ອນໄຫວວຽກງານຊາວໜຸ່ມ ກ່ຄື ວຽກ ງານປົກປັກຮັກສາ ແລະ ສ້າງສາປະເທດຊາດ ໃຫ້ໄດ້ຮັບໝາກ ຜົນຕາມແນວທາງນະໂຍບາຍ ຂອງພັກ - ລັດ ວາງອອກ. ສະ ຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ ມີສະມາຊິກ

## ກອງປະຊຸມ ຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 2 ສາມັກຄີ, 3 ດີ, 4 ພັດທະນາ ຂອງ ຊາວໜຸ່ມ ກະຊວງ ກະສິກຳ ແລະ ປ່າໄມ້

ກອງປະຊຸມ ໂດຍ ທ່ານ ຄຳພັນ ສິດທິດຳພາ ເລ ຂາສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ, ທ່ານ ດຣ. ເພັດ ພົມພິພັກ ຮອງເລຂາຄະນະພັກ ກະຊວງ ກະສິກຳ ແລະ ປ່າໄມ້ ແລະ ທ່ານ ຮສ.ດຣ ລົນຄຳ ດວງສະຫວັນ ເລຂາ ຊປປ ລາວ ກະຊວງ ກະສິກຳ ແລະ ປ່າໄມ້. ກອງປະຊຸມຄັ້ງ ນີ້ ມີສະມາຊິກຊາວໜຸ່ມ ຂອງ ກະຊວງ ກະສິ ກຳ ແລະ ປ່າໄມ້ ເຂົ້າຮ່ວມທັງໝົດ 244 ສະ ຫາຍ ແລະ ແຂກທີ່ຖືກເຊີນຈາກ ຊປປ ລາວ ແຮກສ່ຽວອ້ອມຂ້າງກະຊວງ ເຊັ່ນ: ຊປປ ລາວ ກະຊວງ ປ້ອງກັນປະເທດ, ກະຊວງ ສາທາລະ

*ໂດຍ: ພູທອນ ສົມມະວັນ, ສູນຂໍ້ມູນຂ່າວສານ*

ໃນວັນທີ 25 ກຸມພາ 2011 ຢູ່ທີສະໂມສອນໃຫຍ່, ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ແຫ່ງຊາດ ໄດ້ເປີດ ກອງປະຊຸມ ຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 2 ສາມັກຄີ, 3 ດີ, 4 ພັດທະນາ ຂອງ ຊາວໜຸ່ມ ກະຊວງ ກະສິກຳ ແລະ ປ່າໄມ້ ປະ ຈຳ ສົກປີ 2005 – 2010 ຂຶ້ນ. ໃຫ້ກຽດເປັນປະທານຮ່ວມ ນະສຸກ, ສຳນັກງານນາຍົກລັດຖະມົນຕີ ແລະ ຊປປ ລາວ ຂອງ ແຂວງແຮກສ່ຽວ ຄື: ແຂວງຊຽງຂວາງ, ຫົວພັນ ແລະ ຜົ້ງສາລີ ພ້ອມດ້ວຍເລຂາ ຊປປ ລາວ ຈາກ ບັນດາກົມກອງອ້ອມຂ້າງ ແລະ ສື່ມວນຊົນຕ່າງໆ ເຂົ້າຮ່ວມທັງໝົດ 28 ທ່ານ.

ຈຸດປະສົງຂອງກອງປະຊຸມຄັ້ງນີ້ ແມ່ນເພື່ອຜ່ານບົດສະ ຫຼຸບ 2 ສາມັກຄີ, 3 ດີ, 4 ພັດທະນາ ແລະ ແຜນການຮອດປີ 2015 ຂອງ ຊປປ ລາວ ກະຊວງ ກະສິກຳ ແລະ ປ່າໄມ້

ພ້ອມທັງຕີລາຄາ ສະພາບການຈັດຕັ້ງປະຕິບັດ ຂໍ້ແຂ່ງຂັນໃນ ໄລຍະ5ປີຜ່ານມາ, ໃນນັ້ນຄະນະບໍລິຫານງານ ຊປປ ລາວ ກປ ປະກອບເປັນຄະນະ ມີ 9 ສະຫາຍ ແລະ ຍັງ ເຫຼືອ 8 ສະຫາຍ, 1 ສະຫາຍ ຍົກຍ້າຍໄປ ແຂວງຜົ້ງສາລີ, ມີຫ່ວຍ ຊປປ ລາວ 12 ຫ່ວຍ ແລະ ໄດ້ປະກາດຮັບຮອງໃຫ້ເປັນຫ່ວຍຮາກຖານ ຈຳນວນ 3 ຫ່ວຍ ຮາກຖານ ຄື: ຊປປ ລາວ ຮາກຖານ ສຄກປ, ຊປປ ລາວ ຮາກຖານ ກອງສົ່ງເສີມ ກປ ແລະ ຊປປ ລາວ ຮາກຖານ ກົມປູກຝັງ, ມີສະມາຊິກຊາວໜຸ່ມທັງໝົດ 730 ຄົນ ເປັນຍິງ 271 ຄົນ (ກວມ 37,1%),ໃນນັ້ນ ມີ ສະມາຊິກຊາວໜຸ່ມ ທີ່ເປັນລັດຖະກອນ 676 ຄົນ ແລະ ເປັນນັກຮຽນ 54 ຄົນ, ຊາວໜຸ່ມທີ່ເປັນລັດຖະກອນ ກວມ 65% ຂອງພະນັກງານທັງໝົດທົ່ວ ກະຊວງ ກະສິກຳ ແລະ ປ່າໄມ້ 1,039 ຄົນ ແລະ ເປັນສະມາຊິກພັກ 78 ສະຫາຍ, ສາ ມາດຂະຫຍາຍສະມາຊິກໃໝ່ໄດ້ 94 ຄົນ, ໃນນັ້ນມີຍິງ 39 ຄົນ, ເອົາສະມາຊິກກະສຽນອອກ 23 ຄົນ, ຍິງ 09 ຄົນ ແລະ ສົ່ງພະ ນັກງານສະມາຊິກຊາວໜຸ່ມ ໄປທັດສະນະສຶກສາຢູ່ຕ່າງປະ ເທດດ້ວຍທຶນຈາກສູນກາງຊາວໜຸ່ມ 12 ຄົນ ແລະ ທຶນທາງ ດ້ານວິຊາການ 92 ຄົນ, ສາມາດສ້າງຄັງລວມທັງໝົດໄດ້ 75,812,000 ກີບ.

ກອງປະຊຸມຄັ້ງນີ້ ທ່ານປະທານກອງປະຊຸມ ຍັງໄດ້ ໃຫ້ກຽດມອບໃບຍ້ອງຍໍ ຈາກສູນກາງຊາວໜຸ່ມ ແລະ ໃບຍ້ອງ ຍໍ ຈາກ ກະຊວງ ກະສິກຳ ແລະ ປ່າໄມ້ ໃຫ້ແກ່ບັນດາຫ່ວຍ ຊາວໜຸ່ມ, ກົມ, ກອງ, ສະຖາບັນ ແລະ ສູນຕ່າງໆອອ້ມຂ້າງ ກະຊວງ ກະສິກຳ ແລະ ປ່າໄມ້ ທີ່ມີຜົນງານດີເດັ່ນ ໃນການ ປະກອບສ່ວນສ້າງຜົນງານພັດທະນາຂະແໜງການກະສິກຳ ແລະ ປ່າໄມ້. ໃນນີ້ໄດ້ແບ່ງປະເພດໃບຍ້ອງຍໍ ອອກເປັນ 2 ປະເພດ ຄື: ປະເພດຍ້ອງຍໍຫ່ວຍຊາວໜຸ່ມດີເດັ່ນ ແລະ ປະ ເພດຍ້ອງຍໍສະມາຊິກຊາວໜຸ່ມດີເດັ່ນ ຄື: ປະເພດຍ້ອງຍໍຫ່ວຍ ຊາວໜຸ່ມດີເດັ່ນ ຈາກ ສູນກາງຊາວໜຸ່ມ ມີ 10 ຫ່ວຍ ແລະ ຊົມເຊີຍ 1 ຫ່ວຍ, ປະເພດຍ້ອງຍໍ ສະມາຊິກຊາວໜຸ່ມດີເດັ່ນ 5 ປີ ມີ 12 ຫ່ວຍ, ລວມ 314 ຄົນ, ຍິງ 105 ຄົນ ແລະ ໃບຊົມເຊີຍ ມີ 12 ຫ່ວຍ, ລວມ 195 ຄົນ, ຍິງ 72 ຄົນ, ພິເສດ ໃນບັ້ນສະຫຼຸບຂໍ້ແຂ່ງຂັນ 2 ສາມັກຄີ, 3 ດີ ແລະ 4 ພັດທະນານີ້ ບັນດາຫ່ວຍຊາວໜຸ່ມຮາກຖານ, ກົມ, ກອງ, ສະ ຖາບັນ ແລະ ໂຮງຮຽນ ຍັງໄດ້ຮັບໃບຍ້ອງຍໍອື່ນໆອີກ ເຊັ່ນ: ໃບຍ້ອງຍໍຈາກ ສູນກາງຊາວໜຸ່ມ ປະຊາຊົນປະຕິວັດລາວ ມີ 3 ຫ່ວຍຮາກຖານ ແລະ 14 ຫ່ວຍ, ໃບຍ້ອງຍໍຈາກ ກະ ຊວງ ກະສິກຳ ແລະ ປ່າໄມ້ ມີ 3 ຫ່ວຍຮາກຖານ ແລະ 15 ຫ່ວຍ. ໃນຕອນທ້າຍຂອງກອງປະຊຸມ ທ່ານ ຄຳພັນ ສິດທິດຳ ພາ ເລຂາສູນກາງຊາວໜຸ່ມ ປະຊາຊົນປະຕິວັດລາວ ໄດ້ໃຫ້ ຄຳໂອວາດ ແລະ ທິດຊີ້ນຳ ຕໍ່ບັນດາສະມາຊິກຊາວໜຸ່ມຂອງ ກະຊວງ ກະສິກຳ. ຈາກນັ້ນ ທ່ານ ປະທານ ແລະ ຜູ້ເຂົ້າຮ່ວມ ກອງປະຊຸມ ໄດ້ພ້ອມກັນຮ້ອງເພງ “ບຸນຄຸນພັກປະຊາຊົນປະ ຕິວັດລາວ” ຮ່ວມກັນ ເພື່ອປິດກອງປະຊຸມ ດ້ວຍຄວາມເບີກ ບານມ່ວນຊື່ນ ແລະ ປະສົບຜົນສຳເລັດອັນຈົບງາມ.

# ການຜະລິດຝຸ່ນຊີວະພາບ

*ໂດຍ: ຄອນປານີ ດຸນຜາດີ, ສູນຄົ້ນຄວ້າການນຳໃຊ້ທີ່ດິນ ກະສິກຳ ແລະ ປ່າໄມ້*

*ສາທິດການປະຕິບັດຕົວຈິງວິທີເຮັດຝຸ່ນຊີວະພາບ*

ເພື່ອຕອບສະໜອງຕໍ່ແນວທາງນະໂຍບາຍຂອງພັກ ແລະ ລັດ ໃນການຊຸກຍູ້ ແລະ ສົ່ງເສີມໃຫ້ຊາວກະສິກອນຜະລິດກະສິກຳອິນຊີ ໂດຍການນຳໃຊ້ເສດເຫຼືອກະສິກຳ ແລະ ວັດຖຸດິບທີ່ມີໃນແຕ່ລະທ້ອງຖິ່ນເຂົ້າໃນການຜະລິດຝຸ່ນອິນຊີ ແລະ ຝຸ່ນຊີວະພາບ ເພື່ອໃຊ້ໃນຄອບຄົວ. ຈຸດປະສົງເພື່ອຫຼຸດຜ່ອນການນຳເຂົ້າ ແລະ ຫຼຸດຜ່ອນການນຳໃຊ້ຝຸ່ນເຄມີ ທັງເປັນການຫຼຸດຜ່ອນຕົ້ນທຶນການຜະລິດ ຂອງຊາວກະສິກອນ.

ກຸ່ມຜະລິດຝຸ່ນອິນຊີ ແລະ ຊີວະພາບ ບ້ານປາກຊັນໄຕ້ ເມືອງປາກຊັນ ແຂວງບໍລິຄຳໄຊ, ແມ່ນນຶ່ງໃນໂຄງການຮ່ວມມື ລາວ - ໄທ ພາຍໃຕ້ກອບຂອງໂຄງການ ACMECS. ກຸ່ມດັ່ງກ່າວ ສ້າງຕັ້ງຂຶ້ນໃນກາງປີ 2010 ພາຍຫຼັງ ສະຫາຍ ສຸວັນ ພັນນຸລາດ ນາຍບ້ານບ້ານດັ່ງກ່າວ ໄດ້ກັບມາແຕ່ຝຶກອົບຮົມການຜະລິດຝຸ່ນອິນຊີ ແລະ ຊີວະພາບ ຢູ່ບ້ານສີວິໄລ ເມືອງບົງການ ແຂວງໜອງຄາຍ ປະເທດໄທ ໃນກາງເດືອນ ເມສາ ປີ 2010 ທີ່ຜ່ານມາ. ສະຫາຍ ໄດ້ເຕົ້າໂຮມຊາວກະສິກອນພາຍໃນບ້ານຂອງຕົນ ແລະ ບ້ານອ້ອມຂ້າງ ເພື່ອເຜີຍແຜ່ບົດຮຽນທີ່ໄດ້ຮຽນມາ ພ້ອມກັບສະເໜີແນວຄວາມຄິດໃນການສ້າງກຸ່ມຜະລິດຝຸ່ນອິນຊີໃຊ້ເອງພາຍໃນບ້ານ ແນໃສ່ຂັນຂະຫຍາຍບົດຮຽນທີ່ໄດ້ຮຽນມາ ໃຫ້ເຂົ້າເຖິງຊາວກະສິກອນໃນຂອບເຂດທີ່ຕົນຮັບຜິດຊອບໃນປະຈຸບັນ ກຸ່ມດັ່ງກ່າວ ມີສະມາຊິກທັງໝົດ 6 ຄົນ, ຮ່ວມທຶນກັນສ້າງໂຮງຜະລິດຝຸ່ນອິນຊີຂະໜາດນ້ອຍຂຶ້ນ ໂດຍອາໃສແຫຼ່ງວັດຖຸດິບທີ່ມີ ແລະ ສາມາດຫາໄດ້ພາຍໃນທ້ອງຖິ່ນຂອງຕົນ, ໄລຍະຜ່ານມາ ກຸ່ມດັ່ງກ່າວ ສາມາດຜະລິດຝຸ່ນອິນຊີໄດ້ ປະມານ 12 ໂຕນຕໍ່ລະດູ, ຝຸ່ນຊີວະພາບທີ່ສະກັດຈາກຫອຍເຊີລີ ໄດ້ 200 ລິດ ແລະ ຢາສະໝຸນໄພຂ້າແມງໄມ້ສັດຕູພືດໄດ້ 200 ລິດ, ໃນລະດູຝົນທີ່ຜ່ານມາ ຝຸ່ນດັ່ງກ່າວສ່ວນໃຫຍ່ໄດ້ແບ່ງກັນໃຊ້ ພາຍໃນຄອບຄົວ.

ການນຳໃຊ້ຝຸ່ນອິນຊີ ແລະ ຊີວະພາບຂອງກຸ່ມ ໃນຊ່ວງລະດູຝົນທີ່ຜ່ານມາ ເຊິ່ງເປັນປີທຳອິດ ຂອງການທົດລອງໃຊ້, ຜົນໄດ້ຮັບແມ່ນເປັນໜ້າພໍໃຈພໍສົມຄວນ ແລະ ເຫັນໄດ້ຄວາມແຕກຕ່າງລະຫວ່າງການໃຊ້ຝຸ່ນເຄມີ ແລະ ຝຸ່ນອິນຊີ ເຫັນໄດ້ຂໍ້ດີ ແລະ ຂໍ້ເສຍຂອງການນຳໃຊ້ຝຸ່ນເຄມີ, ຝຸ່ນອິນຊີ ແລະ ຝຸ່ນຊີວະພາບ ທີ່ກະທົບຕໍ່ດິນ ແລະ ຕໍ່ສຸຂະພາບຂອງຄົນເຮົາ.

ການຜະລິດຝຸ່ນຂອງກຸ່ມດັ່ງກ່າວ ແມ່ນໄດ້ຮັບຄຳແນະນຳ ແລະ ສະໜັບສະໜູນຫົວເຊື້ອຈຸລິນຊີຄຸນນະພາບ (ຜດ 1, 2, 3, 6 ແລະ7) ຈາກກົມພັດທະນາທີ່ດິນ ແຫ່ງລາດຊະອານາຈັກໄທ ເພື່ອນຳມາຂະຫຍາຍຕໍ່, ນອກນັ້ນ ຄະນະນັກວິຊາການ ຈາກ ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ແຫ່ງຊາດ ແລະ ກົມພັດທະນາທີ່ດິນ ໄດ້ມາຕິດຕາມຄວາມຄືບໜ້າໃນການຜະລິດ, ໃຫ້ຄຳແນະນຳແກ່ຊາວກະສິກອນ ແລະ ຕິດຕາມຜົນຂອງການຊົມໃຊ້ຝຸ່ນຢ່າງຕໍ່ເນື່ອງ, ເຊັ່ນດຽວກັນ ທາງຫ້ອງການກະສິກຳ ແລະ ປ່າໄມ້ ເມືອງປາກຊັນ ກໍໄດ້ເອົາໃຈໃສ່ລົງຕິດຕາມກຸ່ມດັ່ງກ່າວເປັນປະຈຳ ພ້ອມທັງຊຸກຍູ້ໃຫ້ຜະລິດຫຼາຍກວ່າເກົ່າ ເພື່ອໃຊ້ເອງ ແລະ ຈຳໜ່າຍໃຫ້ແກ່ຊາວກະສິກອນ ຜູ້ອື່ນໆທີ່ມີຄວາມຕ້ອງການ.

ໃນລະດູແລ້ງປີ2011ນີ້,ກຸ່ມຍັງໄດ້ເຮັດການທົດລອງ ອັດຕາຝຸ່ນອິນຊີເພື່ອກຳນົດອັດຕາຝຸ່ນທີ່ເໝາະສົມຕໍ່ເຂົ້ານາ ເພື່ອແນະນຳສະມະຊິກ ແລະ ຜູ້ຊົມໃຊ້. ຈາກການລົງຕິດຕາມ ແລະ ສັງເກດແປງທົດລອງ ຂອງຄະນະນັກວິຊາການ ຄັ້ງວັນທີ 27 /1/ 2011 ທີ່ຜ່ານມາ ເຫັນວ່າ ເຂົ້າຈະເລີນເຕີບໂຕ

*ການລົງຕິດຕາມ ແລະ ສັງເກດນາທົດລອງຝຸ່ນອິນຊີຂອງກຸ່ມ*

ຂຽວງາມສະໝຳສະເໝີດີ ແລະ ເຫັນໄດ້ຄວາມແຕກຕ່າງ ລະຫວ່າງການໃສ່ຝຸ່ນເຄມີ ແລະ ຝຸ່ນອິນຊີ. ນອກນັ້ນ ນັກວິຊາການຈາກກົມພັດທະນາ ຍັງໄດ້ໃຫ້ຂໍ້ແນະນຳຫຼາຍຢ່າງແກ່ສະມະຊິກພາຍໃນກຸ່ມ ໂດຍສະເພາະ ແມ່ນສູດຝຸ່ນອິນຊີຄຸນນະພາບສູງ ແລະ ອັດຕາການນຳໃຊ້ຝຸ່ນຊີວະພາບປະສົມຝຸ່ນອິນຊີທີ່ເໝາະສົມ ເພື່ອໃຫ້ໄດ້ຝຸ່ນອິນຊີຄຸນນະພາບສູງໃຊ້ໃນຄອບຄົວ ແລະ ຈຳໜ່າຍໃຫ້ຊາວກະສິກອນຜູ້ທີ່ສົນໃຈ.

ສະຫາຍ ສຸວັນ ຍັງລາຍງານໃຫ້ຮູ້ວ່າ: ໃນລະດູແລ້ງປີນີ້ ເຫັນວ່າ ຊາວກະສິກອນມີຄວາມສົນໃຈຫຼາຍກວ່າເກົ່າ ແລະ ມີການສັ່ງຈອງຝຸ່ນສູງກ່ວາເກົ່າ, ປະຈຸບັນໃນກຸ່ມມີວັດຖຸດິບທີ່ສາມາດປະສົມຝຸ່ນອິນຊີໄດ້ເຖິງ 10 ໂຕນ ແລະ ຈະສືບຕໍ່ຜະລິດຮັບໃຊ້ໃນກຸ່ມ ແລະ ຈຳໜ່າຍໃນລາຄາທີ່ຖືກກວ່າທ້ອງຕະຫຼາດ ທັງນີ້ ແນໃສ່ຊຸກຍູ້ ແລະ ສົ່ງເສີມໃຫ້ຊາວກະສິກອນລາວໄດ້ນຳໃຊ້ຝຸ່ນອິນຊີຄຸນນະພາບສູງທີ່ຜະລິດຢູ່ລາວເອງ ແລະ ເພື່ອຫຼຸດຜ່ອນການນຳເຂົ້າຈາກຕ່າງປະເທດ. ອີງຕາມແຜນຂອງໂຄງການດັ່ງກ່າວ ໃນຊ້ວງເດືອນ 4 - 5/2011 ນີ້ ຈະໄດ້ເປີດຝຶກອົບຮົມການຜະລິດຝຸ່ນອິນຊີ ແລະ ຊີວະພາບໃຫ້ແກ່ຊາວກະສິກອນອີກ ໃນແຂວງບໍລິຄຳໄຊ ໂດຍອາໃສວິຊາການດ້ານດິນປະຈຳບ້ານ ຈາກປະເທດໄທ ເປັນຜູ້ຖ່າຍທອດຄວາມຮູ້ ແລະ ປະສົບການໃຫ້.

## ການປູກຖົ່ວສະໄຕໂລ ປະສົມໃນສວນຢາງພາລາ

*ຮຽບຮຽງໂດຍ: ຂັນຄຳ ອວ້ນອຸດົມ, ສູນຂໍ້ມູນຂ່າວສານ*

ການປູກຖົ່ວສະໄຕໂລໃນສວນຢາງພາລາ ແມ່ນກິດຈະກຳນຶ່ງ ຂອງໂຄງການຍ່ອຍຄຸ້ມຄອງການຄົ້ນຄວ້າທົດລອງ ທີ່ໄດ້ເລີ້ມຈັດຕັ້ງປະຕິບັດ ໃນພື້ນທີ່ຮ່ວມກັບຊາວກະສິກອນ ໃນປີ2008, ມີເປົ້າໝາຍແນໃສ່ຊອກຫາສ່ອງທາງ ໃນການພັດທະນາຂີດຄວາມສາມາດໃຫ້ແກ່ຊາວກະສິກອນ ໃຫ້ເກີດຄວາມຄ່ອງຕົວໃນການຜະລິດກະສິກຳ ແບບປະສົມປະສານ ລະຫວ່າງການປູກຝັງ ແລະ ລ້ຽງສັດ ໃຫ້ໄດ້ຮັບຜົນຜະລິດສູງ ເພື່ອຍົກລະດັບຊີວິດການເປັນຢູ່ ຂອງຊາວກະສິກອນ ໃຫ້ດີຂຶ້ນເລື້ອຍໆ.

ການປູກຖົ່ວສະໄຕໂລ ສັບຫວ່າງສວນຢາງພາລາເພື່ອເປັນອາຫານໃຫ້ແກ່ການລ້ຽງໝູ ເປັນທາງເລືອກນຶ່ງໃນການປະສົມປະສານລະຫວ່າງການປູກພືດ ແລະ ລ້ຽງສັດ ໃຫ້ມີລັກສະນະກົມກຽວ. ພ້ອມດຽວກັນ, ມັນຍັງເປັນການນຳໃຊ້ພື້ນທີ່ສວນຢາງພາລາ ໃຫ້ເກີດຜົນປະໂຫຍດສູງສຸດ ແລະ ຍົກຜະລິດຕະພາບໃຫ້ແກ່ການລ້ຽງໝູ ໂດຍສາມາດສ້າງລາຍຮັບໃຫ້ແກ່ຊາວກະສິກອນໄດ້ຢ່າງຍາວນານ.

### ຈຸດປະສົງ

ເພື່ອຊ່ວຍໃຫ້ຕົ້ນຢາງພາລາມີການຈະເລີນເຕີບໂຕດີຂຶ້ນ ແລະອີກດ້ານນຶ່ງແມ່ນເພື່ອນຳໃຊ້ພື້ນທີ່ໃນຫວ່າງແຖວຢາງພາລາໃຫ້ເກີດປະໂຫຍດສູງສຸດ ໂດຍການປູກຖົ່ວສະໄຕໂລ ເປັນອາຫານໃຫ້ແກ່ສັດ, ພ້ອມດຽວກັນເພື່ອເປັນບ່ອນສາທິດ ແກ່ຊາວກະສິກອນໃນເຂດກຸ່ມບ້ານເປົ້າໝາຍຂອງໂຄງການ ແລະ ຊາວກະສິກອນຜູ້ສົນໃຈທົ່ວໄປ.

### ວິທີການ

ໄດ້ຈັດຕັ້ງປະຕິບັດ ຢູ່ບ້ານແວນ ແລະ ບ້ານພູວຽງ ມີຄອບຄົວເຂົ້າຮ່ວມທັງໝົດ 11 ຄອບຄົວ. ໃນນັ້ນ, ບ້ານແວນ ມີ 6 ຄອບຄົວ ແລະ ບ້ານພູວຽງ ມີ 5 ຄອບຄົວ, ມີເນື້ອທີ່ປູກທັງໝົດ 2 ເຮັກຕາ ໃນນັ້ນ 1 ຄອບຄົວ ມີເນື້ອທີ່ປູກ1 ໄລ່ (1,600 ຕາແມັດ ຫຼື 40 x 40 ແມັດ).

### ຮູບແບບການທົດລອງປູກຖົ່ວສະໄຕໂລສັບຫວ່າງຢາງພາລາ ໃນທາງປະຕິບັດ

1 ຄອບຄົວ ເທົ່າກັບ 2 ດອນ; 1 ດອນ (T1) ປູກຖົ່ວສະໄຕໂລໃສ່ ແລະ 1 ດອນ (T0) ບໍ່ໄດ້ປູກຫຍັງໃສ່ ແຕ່ມີການບົວລະບັດຮັກສາເປັນປົກກະຕິ.

### ວິທີການປູກຖົ່ວສະໄຕໂລ ສັບຫວ່າງຢາງພາລາ

ຂຸດໜານປູກຕາມຫວ່າງແຖວຢາງພາລາ ໂດຍໃຫ້ຫ່າງຈາກແຖວຢາງ 1.5 ແມັດ *(ສະແດງວ່າ: ຖ້າໄລຍະຫ່າງແຖວຢາງ 8 ແມັດ ຈະມີພື້ນທີ່ປູກຖົ່ວສະໄຕໂລ 5 ແມັດ)* ໄລຍະຫ່າງຂອງໜານປູກ 1 ແມັດ, ຂຸດດິນເລິກປະມານ 10 ຊັງຕີແມັດ, ຫວ່ານແກ່ນຖົ່ວສະໄຕໂລໃສ່ຕາມໜານປູກທີ່ໄດ້ກະກຽມໄວ້ແລ້ວ ໂດຍຫວ່ານໃນປະລິມານທີ່ພໍດີ (ຕາມປົກກະຕິ ອັດຕາການປູກ 8 ກິໂລກຼາມ/ເຮັກຕາ). 1 ແຖວປູກຢາງ ຈະປູກຖົ່ວໄດ້ 6 ໜານ/ຮ່ອງ.

### ຜົນຜະລິດຂອງຖົ່ວສະໄຕໂລ

ຖົ່ວສະໄຕໂລ, ເມື່ອນຳມາປູກສັບຫວ່າງໃນສວນຢາງພາລາ ມັນສາມາດໃຫ້ຜົນຜະລິດໃບສົດ ໄດ້ເຖິງ 9 ຫາ 10 ໂຕນ/ເຮັກຕາ.

### ຜົນປະ�โຫຍດຕໍ່ການລ້ຽງສັດ

ຖົ່ວສະໄຕໂລ ສາມາດເກັບກ່ຽວຜົນຜະລິດໃບສົດໄດ້ພາຍຫຼັງປູກໄດ້ 3 ເດືອນ. ຊາວກະສິກອນໄດ້ນຳເອົາໃບຖົ່ວສະໄຕໂລສົດ ເປັນອາຫານໝູ, ໄກ່ ແລະ ແບ້, ເປັນຕົ້ນແມ່ນ

ໝູ ເຂົາເຈົ້າໄດ້ນຳໃຊ້ໃບຖົ່ວສະໄຕໂລສົດເປັນອາຫານ ໂດຍການປະສົມກັບອາຫານພື້ນບ້ານ (ຮຳ, ສາລີ ແລະ ອື່ນໆ). ປົກກະຕິ, ຊາວບ້ານລ້ຽງໝູ ຈະໃຊ້ເວລາການລ້ຽງນຶ່ງປີ ຈຶ່ງສາມາດຂາຍອອກໄດ້, ແຕ່ເມື່ອເຂົາເຈົ້າໄດ້ທົດລອງລ້ຽງໝູ ດ້ວຍ

ການນຳໃຊ້ຖົ່ວສະໄຕໂລສົດ ປະສົມກັບອາຫານພື້ນບ້ານ ມັນໄດ້ເຮັດໃຫ້ໝູໃຫຍ່ໄວ ແລະ ມີນ້ຳໜັກເພີ້ມຂຶ້ນ ຊຶ່ງສາມາດຂາຍໄດ້ ພາຍໃນໄລຍະເວລາ 6 ເດືອນ.

### ຜົນປະ�โຫຍດທາງດ້ານເສດຖະກິດ ແລະ ສັງຄົມ

ໂດຍປົກກະຕິ, ຊາວກະສິກອນບົວລະບັດຮັກສາສວນຢາງ (ຖາງຫຍ້າ) 3 ຄັ້ງ/ປີ ຈະສິ້ນເປືອງແຮງງານ 30 ແຮງງານ/ເຮັກຕາ/ຄັ້ງ ຄິດເປັນເງິນ 600,000 ກີບ/ຄັ້ງ/ເຮັກຕາ. ສະນັ້ນ, ໃນ 1 ປີ ຈະສິ້ນເປືອງແຮງງານ 90 ແຮງງານ ຄິດເປັນເງິນ 1,800,000 ກີບ/ປີ/ເຮັກຕາ. ໝາຍຄວາມວ່າ ການປູກຖົ່ວສະໄຕໂລໃນສວນຢາງພາລາ ຊ່ວຍຊາວກະສິກອນຫຼຸດຜ່ອນແຮງງານ ແລະ ທຶນຮອນທີ່ນຳໃຊ້ເຂົ້າໃນການບົວລະບັດຮັກສາສວນຢາງໄດ້ເຖິງ 3 ປີ ຄິດເປັນເງິນ ເທົ່າກັບ 5,400,000 ກີບ.

### ສະຫຼຸບ

ການປູກຖົ່ວສະໄຕໂລ ສັບຫວ່າງສວນຢາງພາລາ ໄດ້ມີຜົນເຮັດໃຫ້ຕົ້ນຢາງພາລາມີການຈະເລີນເຕີບໂຕໄວກວ່າສວນຢາງພາລາທີ່ບໍ່ໄດ້ປູກຖົ່ວສະໄຕໂລ; ທາງດ້ານໜ້າຕ້າງຫຼາຍກວ່າ 23% ແລະ ທາງດ້ານລວງສູງ ສູງກວ່າ 25% ຂອງການຂະຫຍາຍຕົວທັງໝົດ ທັງນີ້ກໍ່ເນື່ອງຈາກວ່າ ຖົ່ວສະໄຕໂລ ເປັນພືດຕະກຸນຖົ່ວທີ່ມີຄຸນປະ�โຫຍດ ຊ່ວຍໃນການປັບປຸງດິນ ແລະ ຄຸມວັດສະພືດ (ຫຍ້າ), ໃນຂະນະດຽວກັນການປູກຖົ່ວສະໄຕໂລໃນສວນຢາງພາລາ ຍັງເຮັດໃຫ້ຊາວກະສິກອນຫຼຸດຜ່ອນແຮງງານ ແລະ ມັນສາມາດໃຊ້ເປັນອາຫານສັດ ພ້ອມທັງຫຼຸດຜ່ອນຄ່າໃຊ້ຈ່າຍ ໃນການຊື້ອາຫານມາລ້ຽງໝູ.

ສິ່ງທີ່ໄດ້ກ່າວມານັ້ນ, ໄດ້ເປັນສິ່ງຈູງໃຈຊາວກະສິກອນທີ່ເຂົ້າຮ່ວມໂຄງການ, ພາຍໃນບ້ານ ແລະ ບ້ານອ້ອມຂ້າງ ເຫັນຜົນໄດ້ຮັບດັ່ງກ່າວ ຈຶ່ງມີແນວຄວາມຄິດທີ່ຈະນຳເອົາຮູບແບບດັ່ງກ່າວ ໄປຈັດຕັ້ງປະຕິບັດໃນພື້ນທີ່ຂອງເຂົາເຈົ້າເອງ ແລະ ມີບາງຄອບຄົວມີແນວຄວາມຄິດໃນການຫັນອາຊີບມາປູກຖົ່ວສະໄຕໂລເພື່ອລ້ຽງໝູ ຫຼື ສັດອື່ນໆ. ສະນັ້ນ, ມາຮອດປະຈຸບັນ

ກິດຈະກຳດັ່ງກ່າວ ໄດ້ຂະຫຍາຍ ຈາກ 2 ບ້ານ (11 ຄອບຄົວ) ເປັນ 5 ບ້ານ(18 ຄອບຄົວ).

### ຂໍ້ສະເໜີແນະ

ດັ່ງທີ່ໄດ້ກ່າວຂ້າງເທິງນັ້ນ, ມັນເປັນຜົນໄດ້ຮັບເບື້ອງຕົ້ນ ຂອງການຈັດຕັ້ງປະຕິບັດການທົດລອງ ປູກຖົ່ວສະໄຕໂລ ໃນສວນຢາງພາລາ. ສະນັ້ນ, ຈະໄດ້ມີການສືບຕໍ່ຄົ້ນຄວ້າເຕັກນິກ ດັ່ງກ່າວຕື່ມອີກ ທັງນີ້ ເພື່ອເປັນການຮັບປະກັນການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນສູງຂຶ້ນກວ່າເກົ່າໃນອະນາຄົດ.

# ການລ້ຽງໄກ່ເຫຼືອງ ດ້ວຍການນຳໃຊ້ຖົ່ວສະໄຕໂລເປັນອາຫານເສີມ

*ຮຽບຮຽງໂດຍ: ຂັນຄຳ ອ້ວນອຸດົມ, ສູນຂໍ້ມູນຂ່າວສານ*

ໃນໄລຍະຜ່ານມາ ການລ້ຽງໄກ່ຂອງຊາວກະສິກອນ ແມ່ນລ້ຽງຕາມທຳມະຊາດ ດ້ວຍການນຳໃຊ້ແນວພັນພື້ນເມືອງ ແລະ ບໍ່ມີການຈັດການທີ່ດີ ເຮັດໃຫ້ການລ້ຽງໄກ່ບໍ່ໄດ້ຮັບຜົນດີ ແລະ ເກີດພະຍາດລະບາດ. ການທົດລອງນຳເອົາແນວພັນໄກ່ເຫຼືອງມາລ້ຽງ ດ້ວຍການໃຫ້ອາຫານເສີມ ແມ່ນກິດຈະກຳນຶ່ງ ຂອງໂຄງການຄົ້ນຄວ້າເຂດພູດອຍ ແລະ ພັດທະນາຄວາມສາມາດ ເພື່ອຍົກລະດັບຜະລິດຕະພາບການລ້ຽງໄກ່ ຂອງຊາວກະສິກອນ ຢູ່ເມືອງວຽງຄຳ ແຂວງຫຼວງພະບາງ ໃຫ້ດີຂຶ້ນ.

### ຈຸດປະສົງ

ເພື່ອສຶກສາການລ້ຽງໄກ່ຫຼືອງ ດ້ວຍການນຳໃຊ້ອາຫານເສີມ ຄື ຖົ່ວສະໄຕໂລ ເພື່ອສ້າງລາຍຮັບເພີ້ມໃຫ້ແກ່ຄອບຄົວ.

### ວິທີການ

- ຈຳນວນໄກ່ທັງໝົດ 36 ໂຕ/ຄອບຄົວ, ມີທັງໝົດ 10 ຄອບຄົວ
- ຂະໜາດຄອກ 2.5 x 3 ແມັດ, ຍົກພື້ນສູງ 50 ຊັງຕິແມັດ.
- ຮູບແບບການລ້ຽງແບບຂັງ (ໃນວົງຮົ້ວ 15x15 ມ).
- ເສີມຖົ່ວສະໄຕໂລ 10% ກັບອາຫານທ້ອງຖິ່ນ.
- ອາຍຸໄກ່ 45 ມື້, ມີນ້ຳໜັກ ສະເລ່ຍ 460 ກຼາມ/ໂຕ.
- ສັກປ້ອງກັນພະຍາດອະຫິວາສັດປີກ.

### ຜົນໄດ້ຮັບ

- ລ້ຽງໄກ່ພຽງແຕ່ 4 ເດືອນ, ມີນ້ຳໜັກສະເລ່ຍ 2.2 ກິໂລຕໍ່ໂຕ ຂອງຄອບຄົວ ທີ່ເຂົ້າຮ່ວມໂຄງການ ແລະ ຄອບຄົວທີ່ບໍ່ເຂົ້າຮ່ວມໂຄງການ, ມີນ້ຳໜັກ ພຽງແຕ່ 1.3 ກິໂລຕໍ່ໂຕ.
- ຜ່ານການລ້ຽງໄກ່ເຫຼືອງ ເສີມຖົ່ວສະໄຕໂລ ເຫັນວ່າ ໄກ່ໃຫຍ່ໄວ, ສ້າງລາຍຮັບເສີມໄດ້ດີ ແລະ ຕອບສະໜອງສະບຽງອາຫານ ໃຫ້ແກ່ຄອບຄົວນຳອີກ.
- ຊາວກະສິກອນພາຍໃນບ້ານ ມີຄວາມມັກໃນການ ລ້ຽງ ແລະ ສິ່ງແທນທຶນຄືນ ເພື່ອຂະຫຍາຍອອກສູ່ ຄອບຄົວອື່ນ ຊຶ່ງເພີ້ມຂຶ້ນເປັນ 20 ຄອບຄົວ.